ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈຳປາສັກ

ເລກທີ 1214/ຈຂ.ຈສ

ຈຳປາສັກ, ວັນທີ 23 ເດືອນ 11...2018

# ຂໍ້ຕົກລົງ

## ວ່າດ້ວຍການປະເມີນມູນຄ່າທີ່ດິນ ໃນຂອບເຂດເມືອງຊະນະສົມບູນ, ເມືອງປະທຸມພອນ, ເມືອງຈຳປາສັກ, ເມືອງສຸຂຸມາ, ເມືອງມູນລະປາໂມກ ແລະ ເມືອງໂຂງ, ແຂວງຈຳປາສັກ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003.
- ອີງຕາມ ມະຕິກອງປະຊຸມ ສະພາປະຊາຊົນແຂວງ ຈຳປາສັກ ສະໄໝສາມັນເທື່ອທີ 5 ຊຸດທີ I ຄັ້ງວັນທີ 7-9 ສິງຫາ 2018.
- ອີງຕາມໜັງສືສະເໜີຂອງ ຄະນະປະຈຳສະພາປະຊາຊົນແຂວງ ຈຳປາສັກ ສະບັບເລກທີ 94/ຄປຈ.ສພຂ , ລົງວັນທີ 31 ຕຸລາ 2018.

## ເຈົ້າແຂວງ ແຂວງຈຳປາສັກ ຕົກລົງ:

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການຕ່າງໆ ໃນການປະເມີນມູນຄ່າທີ່ດິນໃນ 6 ເມືອງຄື: ເມືອງຊະນະສົມບູນ, ເມືອງປະທຸມພອນ, ເມືອງຈຳປາສັກ, ເມືອງສຸຂຸມາ, ເມືອງມູນລະປາໂມກ ແລະ ເມືອງໂຂງ, ແຂວງຈຳປາສັກ ແນໃສ່ເຮັດໃຫ້ການຄຸ້ມຄອງທີ່ດິນ ເຂົ້າສູ່ລະບຽບກົດໝາຍ, ສ້າງຄວາມໂປ່ງໃສໃຫ້ແກ່ ພະນັກງານຜູ້ຮັບຜິດຊອບ ເພື່ອຕອບສະໜອງໃຫ້ແກ່ ການພັດທະນາທີ່ດິນແຕ່ລະໄລຍະ, ຈັດຕັ້ງປະຕິບັດການຈົດທະບຽນທີ່ດິນ ແລະ ເກັບລາຍຮັບເຂົ້າງົບປະມານແຫ່ງລັດ.

**ມາດຕາ 2. ລະບົບການປະເມີນມູນຄ່າທີ່ດິນ**

ການປະເມີນມູນຄ່າທີ່ດິນ ແມ່ນການຄາດຄະເນລາຄາທີ່ດິນ ຫຼື ການປະເມີນລາຄາທີ່ດິນ ໂດຍທຽບກັບເກນທີ່ຕັ້ງໄວ້ວ່າ ມີລາຄາສູງ - ຕໍ່າ ໃນລະດັບໃດ.

ລະບົບປະເມີນມູນຄ່າທີ່ດິນ ແມ່ນເປັນລະບົບໜຶ່ງທີ່ສຳຄັນ ເປັນວິທີການເກັບກຳຂໍ້ມູນຕາມລາຄາທີ່ດິນໃນແຕ່ລະເຂດ ເພື່ອເປັນພື້ນຖານໃນການຄິດໄລ່ຄ່າທຳນຽມຈົດທະບຽນ ກ່ຽວກັບທີ່ດິນ ຫຼື ການໂອນສິດນຳໃຊ້ທີ່ດິນ.

ມາດຕາ 3. ອະທິບາຍຄຳສັບ

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. ສັນຍາລັກ B1 – B17 ໝາຍເຖິງ ເຂດປະເມີນທີ່ດິນ ຂອງບ້ານຕ່າງໆ ທີ່ຂຶ້ນກັບເມືອງ ຊະນະສົມບູນ.
2. ສັນຍາລັກ E1 – E7 ໝາຍເຖິງ ເຂດປະເມີນທີ່ດິນ ຂອງບ້ານຕ່າງໆ ທີ່ຂຶ້ນກັບເມືອງ ປະທຸມພອນ.
3. ສັນຍາລັກ G1 – G13 ໝາຍເຖິງ ເຂດປະເມີນທີ່ດິນ ຂອງບ້ານຕ່າງໆ ທີ່ຂຶ້ນກັບເມືອງ ຈຳປາສັກ.
4. ສັນຍາລັກ H1 – H14 ໝາຍເຖິງ ເຂດປະເມີນທີ່ດິນ ຂອງບ້ານຕ່າງໆ ທີ່ຂຶ້ນກັບເມືອງ ສຸຂຸມາ.
5. ສັນຍາລັກ I1 – I7 ໝາຍເຖິງ ເຂດປະເມີນທີ່ດິນ ຂອງບ້ານຕ່າງໆ ທີ່ຂຶ້ນກັບເມືອງ ມູນລະປະໂມກ.
6. ສັນຍາລັກ J1 – J10 ໝາຍເຖິງ ເຂດປະເມີນທີ່ດິນ ຂອງບ້ານຕ່າງໆ ທີ່ຂຶ້ນກັບເມືອງ ໂຂງ.
7. ແຜນທີ່ເຂດປະເມີນມູນຄ່າທີ່ດິນ ໝາຍເຖິງພື້ນທີ່ເຊິ່ງກຳນົດໄວ້ ເພື່ອການປະເມີນມູນຄ່າສຳລັບຮັບໃຊ້ໃຫ້ແກ່ການຄິດໄລ່ຄ່າທຳນຽມຈົດທະບຽນມອບ - ໂອນສິດນຳໃຊ້ທີ່ດິນ, ແຜນທີ່ເຂດປະເມີນມູນຄ່າແຕ່ລະສະບັບກວມເອົາພື້ນທີ່ໃນຂອບເຂດ 6 ເມືອງທີ່ໄດ້ມີການສຳຫຼວດ ແລະ ຖືກຈັດແບ່ງອອກເປັນຫຼາຍເຂດຍ່ອຍເອີ້ນວ່າ (ເຂດປະເມີນມູນຄ່າທີ່ດິນ) ແຜນທີ່ເຂດປະເມີນມູນຄ່າທີ່ດິນຂອງ ແຕ່ລະເມືອງຈະມີການກຳນົດລະຫັດເປັນຕົວອັກ ສອນລາຕິນ (A B C .......) ຕາມເລກລະຫັດຂອງ ການປົກຄອງພາຍໃນແຂວງ.
8. ເຂດປະເມີນມູນຄ່າທີ່ດິນ ໝາຍເຖິງພື້ນທີ່ໃນແຜນທີ່ເຂດປະເມີນມູນຄ່າທີ່ດິນຂອງ ເມືອງເຊິ່ງໄດ້ຈັດແບ່ງອອກເປັນຫຼາຍເຂດຍ່ອຍ ໂດຍອີງຕາມ 4 ລັກສະນະພື້ນຖານຂອງພື້ນທີ່ຄື:
    - ເຂດໃຈກາງຕົວເມືອງ (ເຂດທຸລະກິດການຄ້າ, ເຂດສຳນັກງານອົງການ).
    - ເຂດອ້ອມໃຈກາງຕົວເມືອງ (ເຂດອຸດສະຫະກຳ, ເຂດທີ່ຢູ່ອາໃສ).
    - ເຂດຊານເມືອງ (ເຂດອຸດສະຫະກຳ, ເຂດທີ່ຢູ່ອາໃສ).
    - ເຂດຊົນນະບົດ (ເຂດທີ່ຢູ່ອາໃສ, ເຂດກະສິກຳ, ເຂດປ່າໄມ້).
9. ຕາຕະລາງອັດຕາຄິດໄລ່ສຳລັບທີ່ດິນ ໝາຍເຖິງອັດຕາຄິດໄລ່ທີ່ໄດ້ກຳນົດ ເຂົ້າໃນຕາຕະລາງສຳລັບທີ່ດິນໃນແຕ່ລະເຂດປະເມີນມູນຄ່າທີ່ດິນ, ອັດຕາຄິດໄລ່ດັ່ງກ່າວ ແມ່ນໄດ້ກຳນົດຂຶ້ນບົນພື້ນຖານການເກັບກຳຂໍ້ມູນລາຄາປະກົດຕົວຂອງ ຕະຫຼາດທີ່ດິນຕົວຈິງເຊິ່ງກຳນົດ 4 ອົງປະກອບສຳຄັນຂອງ ທີ່ດິນ (ທີ່ຕັ້ງ ພື້ນຖານໂຄງລ່າງ, ການພັດທະນາ ແລະ ຄຸນນະພາບຂອງທີ່ດິນ) ເຂົ້າໃນການປະເມີນມູນຄ່າທີ່ດິນ, ຈາກນັ້ນຈຶ່ງວິເຄາະ, ວິໄຈຂໍ້ມູນກ່ຽວກັບມູນຄ່າທີ່ດິນໃນແຕ່ລະເຂດ ເພື່ອຊອກຫາມູນຄ່າສະເລ່ຍທີ່ສາມາດເປັນຕົວແທນໃຫ້ແກ່ບັນດາຕອນດິນ ເຂົ້າໃນຕາຕະລາງອັດຕາຄິດໄລ່ ສຳລັບແຕ່ລະເຂດປະເມີນມູນຄ່າທີ່ດິນ ໂດຍແບ່ງບັນດາຕອນດິນອອກເປັນ 4 ລະດັບຕາມປະເພດຂອງ ຖະໜົນຄື: ຖະໜົນສາຍເອກ, ຖະໜົນສາຍເຊື່ອມ, ຖະໜົນສາຍແຈກ ແລະ ຖະໜົນທາງຮ່ອມ.

- ຖະໜົນສາຍເອກ ໝາຍເຖິງການກຳນົດອອກຂອງ ກົດໝາຍທາງຫຼວງເຊັ່ນ: ຖະໜົນເຊື່ອມຕໍ່ລະຫວ່າງປະເທດ, ເສັ້ນທາງເຊື່ອມຕໍ່ລະຫວ່າງແຂວງຕໍ່ແຂວງ ແລະ ເສັ້ນທາງເຊື່ອມຕໍ່ລະຫວ່າງເມືອງຕໍ່ເມືອງ.
- ຖະໜົນສາຍເຊື່ອມ ໝາຍເຖິງຖະໜົນແຍກອອກຈາກຖະໜົນສາຍເອກ.
- ຖະໜົນສາຍແຈກ ໝາຍເຖິງຖະໜົນທາງຮ່ອມ.
- ຖະໜົນທາງຮ່ອມ ໝາຍເຖິງທາງດັ້ງເດີມ.

10. ການປະເມີນມູນຄ່າ ຕາມສູດຄິດໄລ່ໝາຍເຖິງ ການຄິດໄລ່ທີ່ກຳນົດໄວ້ ຕາມເຂດປະເມີນທີ່ໄດ້ກຳນົດອອກໃນຂໍ້ຕົກລົງສະບັບນີ້.

11. ການປະເມີນມູນຄ່າ ຕາມແບບສະເພາະໝາຍເຖິງ ການປະເມີນມູນຄ່າຊື້ - ຂາຍສິດນຳໃຊ້ທີ່ດິນທີ່ສົມເຫດສົມຜົນ ແລະ ປະເມີນບົນພື້ນຖານມູນຄ່າຕະຫຼາດໃນປະຈຸບັນຂອງ ຕອນດິນນັ້ນໃນວັນ ແລະ ເວລາທີ່ທຳການປະເມີນ.

12. ການຈົດທະບຽນນິຕິກຳ ກ່ຽວກັບທີ່ດິນ ໝາຍເຖິງການບັນທຶກທຸກການເຄື່ອນໄຫວ, ການປ່ຽນແປງກ່ຽວກັບສິດນຳໃຊ້ທີ່ດິນ ເຂົ້າໃສ່ປຶ້ມຈົດທະບຽນນິຕິກຳ.

**ມາດຕາ 4. ອົງປະກອບສຳຄັນໃນການປະເມີນມູນຄ່າທີ່ດິນ**

ການປະເມີນມູນຄ່າທີ່ດິນມີ 4 ອົງປະກອບດັ່ງນີ້:

1. ທີ່ຕັ້ງຂອງຕອນດິນ (ຈຸດພິເສດບ່ອນດິນຕັ້ງຢູ່).
2. ພື້ນຖານໂຄງລ່າງ (ສິ່ງອຳນວຍຄວາມສະດວກສຳລັບທີ່ດິນ).
3. ການພັດທະນາທີ່ດິນ (ອີງຕາມການໃຊ້ປະໂຫຍດຕົວຈິງໃນຕອນດິນ).
4. ຄຸນນະພາບຂອງທີ່ດິນ (ອີງຕາມປະເພດການນຳໃຊ້).

**ມາດຕາ 5. ການປະເມີນມູນຄ່າທີ່ດິນ**

ການປະເມີນມູນຄ່າທີ່ດິນມີ 2 ວິທີຄື:

1. ຕາມສູດຄິດໄລ່ ແມ່ນການຄິດໄລ່ຕາມເຂດປະເມີນ ຫົວໜ່ວຍ (ກີບ / ຕາແມັດ) ກຳນົດໄວ້ຕາມເຂດປະເມີນທີ່ໄດ້ກຳນົດອອກຢ່າງເປັນທາງການ.
2. ຕາມແບບສະເພາະ ແມ່ນການຄິດໄລ່ທີ່ບໍ່ນອນໃນເຂດປະເມີນ.

**ມາດຕາ 6. ການຄຸ້ມຄອງລະບົບປະເມີນມູນຄ່າທີ່ດິນ**

ການຄຸ້ມຄອງລະບົບປະເມີນມູນຄ່າທີ່ດິນ ແມ່ນຕັ້ງຢູ່ບົນພື້ນຖານການເກັບກຳຂໍ້ມູນ ກ່ຽວກັບລາຄາທີ່ມີການມອບ - ໂອນສິດນຳໃຊ້ທີ່ດິນຕົວຈິງ ເພື່ອໃຫ້ມີຄວາມຖືກຕ້ອງ ແລະ ມີປະສິດທິຜົນໃນການຈັດຕັ້ງປະຕິບັດທຸກໆ ຄັ້ງທີ່ມີການຍື່ນຄຳຮ້ອງ ເພື່ອຈົດທະບຽນກ່ຽວກັບທີ່ດິນ, ພະນັກງານປະເມີນມູນຄ່າທີ່ດິນ ຕ້ອງໄດ້ປະເມີນ ແລະ ເກັບກຳລາຍລະອຽດກ່ຽວກັບທີ່ດິນ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ໃຫ້ສອດຄ່ອງກັບລະບຽບກົດໝາຍ.

**ມາດຕາ 7. ຄວາມສຳຄັນຂອງການເກັບກຳຂໍ້ມູນ**

ພະນັກງານປະເມີນມູນຄ່າທີ່ດິນ ຕ້ອງສັງລວມຂໍ້ມູນຢ່າງຕໍ່ເນື່ອງ ເພື່ອໃຫ້ສາມາດຄາດຄະເນ ແລະ ຕິດຕາມການເໜັງຕີງຂອງ ມູນຄ່າທີ່ດິນໃນແຕ່ລະໄລຍະ ເພື່ອການວິເຄາະຂໍ້ມູນ ກ່ຽວກັບທີ່ດິນຢ່າງລະອຽດ ໂດຍອີງໃສ່ 4 ອົງປະກອບສຳຄັນເປັນພື້ນຖານ ທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 8. ຫຼັກການເຄື່ອນໄຫວ**

ການເຄື່ອນໄຫວວຽກງານປະເມີນມູນຄ່າທີ່ດິນໃນ 6 ເມືອງຄື: ເມືອງຊະນະສົມບູນ, ເມືອງປະທຸມພອນ, ເມືອງຈຳປາສັກ, ເມືອງສຸຂຸມາ, ເມືອງມູນລະປາໂມກ ແລະ ເມືອງໂຂງ, ແຂວງຈຳປາສັກ ໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ກໍ່ຄືແຜນພັດທະນາເສດຖະກິດ - ສັງຄົມຂອງ ແຂວງ ແລະ ໃຫ້ສອດຄ່ອງກັບແຜນແມ່ບົດການຈັດສັນດິນແຫ່ງຊາດ.
2. ສອດຄ່ອງກັບວຽກງານຈົດທະບຽນທີ່ດິນ.
3. ຮັບປະກັນຄວາມໂປ່ງໃສ, ເປີດເຜີຍ, ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ມາດຕາ 9. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ສະເພາະ 6 ເມືອງຄື: ເມືອງຊະນະສົມບູນ, ເມືອງປະທຸມພອນ, ເມືອງຈຳປາສັກ, ເມືອງສຸຂຸມາ, ເມືອງມູນລະປາໂມກ ແລະ ເມືອງໂຂງ, ແຂວງຈຳປາສັກ.

## ໝວດທີ II
## ເຂດປະເມີນມູນຄ່າທີ່ດິນ ໃນ 6 ເມືອງ ແຂວງຈຳປາສັກ

ມາດຕາ 10. ເຂດປະເມີນມູນຄ່າທີ່ດິນ ຂອງ ເມືອງ ຊະນະສົມບູນ

ທີ່ດິນເມືອງ ຊະນະສົມບູນ ທີ່ໄດ້ປະເມີນແລ້ວມີ 17 ເຂດ ( B1 – B17 ) ກວມເອົາ 47 ບ້ານມີ 4 ປະເພດຖະໜົນລະອຽດດັ່ງນີ້:

ຕາຕະລາງລາຍຊື່ບ້ານທີ່ນອນຢູ່ໃນເຂດປະເມີນລາຄາ ຕາມ B

| B1 | B2 | B3 | B4 |
|---|---|---|---|
| 1. ບ້ານ ປາກຊອນ<br>2. ບ້ານ ໜອງຫອຍ<br>3. ບ້ານ ສີວິໄລ<br>4. ບ້ານ ນາຂວ້າງ<br>5. ບ້ານ ສະຜາຍ<br>6. ບ້ານ ໂຍງ<br>- ຄຸ້ມລີ້ມໂຮງ<br>- ຄຸ້ມໂຍງກາງ | 1. ບ້ານ ຫ້ວຍຍາງ<br>2. ບ້ານ ງີ້ວ<br>- ຄຸ້ມໂຍງເໜືອ (ບ້ານ ໂຍງ)<br>- ຄຸ້ມກະຕິນໃຫຍ່ (ບ້ານ ໂຍງ) | 1. ບ້ານ ດົງລານຄຳ<br>2. ບ້ານ ນາແກວ<br>3. ບ້ານ ຊອນພາກ | 1. ບ້ານ ບຸງຄ້າ<br>2. ບ້ານ ສີທອນ<br>3. ບ້ານ ໜອງເມັກ<br>4. ບ້ານ ອອກເມືອງ |
| **B5** | **B6** | **B7** | **B8** |
| 1. ບ້ານ ສີງສຳພັນ | 1. ບ້ານ ສຸລະ | 1. ບ້ານ ຄຳຫຼວງ<br>2. ບ້ານ ໜອງແຄນ<br>3. ບ້ານ ຄຳແປງ | 1. ບ້ານ ໜອງດູ່<br>2. ບ້ານ ໂນນສະຫ້ອນ<br>3. ບ້ານ ນາຂາມ<br>4. ບ້ານ ນາດ່ານ<br>5. ບ້ານ ສຸວັນນະຄີລີ |

| B9 | 10 | B11 | B12 |
|---|---|---|---|
| 1. ບ້ານ ງິ້ວແດງ<br>2. ບ້ານ ນາຊອນ<br>3. ບ້ານ ນາຫຼົ້ງ<br>4. ບ້ານ ເດື່ອ<br>5. ບ້ານ ໂສໂລໃຫຍ່<br>6. ບ້ານ ໂສໂລນ້ອຍ | 1. ບ້ານ ປາກປາກັ້ງ<br>2. ບ້ານ ຫີນລາດ | 1. ບ້ານ ສະລີ<br>2. ບ້ານ ວັງເວີນ | 1. ບ້ານ ປິ່ງເກີມ<br>2. ບ້ານ ນາພູຄໍາ<br>3. ບ້ານ ຄໍາບອນ |
| **B13** | **B14** | **B15** | **B16** |
| 1. ບ້ານ ໜອງໂນ<br>2. ບ້ານ ແກ້ງໄມ້ເຮັຍ<br>3. ບ້ານ ທົ່ງຮີ<br>4. ບ້ານ ແກ້ງກອກ | 1. ບ້ານ ແຊລະບໍາ | 1. ບ້ານ ຈໍາປີ<br>2. ບ້ານ ພູທອງລຸ່ມ<br>- ຄຸ້ມນາໂພນຄໍາ<br>(ບ້ານ ໂສໂລໃຫຍ່ ) | 1. ບ້ານ ດອນແຊ |
| **B17** | | | |
| 1. ບ້ານ ດອນໂດ | | | |

ຕາຕະລາງຄິດໄລ່ສໍາລັບທີ່ດິນເມືອງ ຊະນະສົມບູນ ( ກີບ / ຕາແມັດ )

| ເຂດປະເມີນ ລາຄາທີ່ດິນ | ປະເພດຖະໜົນ | | | |
|---|---|---|---|---|
| | ຖະໜົນສາຍເອກ ( ກີບ/ຕາແມັດ ) | ຖະໜົນສາຍເຊື່ອມຕໍ່ ( ກີບ/ຕາແມັດ ) | ຖະໜົນສາຍແຈກ ( ກີບ/ຕາແມັດ ) | ຖະໜົນທາງຮ່ອມ ( ກີບ/ຕາແມັດ ) |
| B1 | 50.000 | 30.000 | 15.000 | 2.000 |
| B2 | - | - | 5.000 | 1.500 |
| B3 | 45.000 | 20.000 | 3.000 | 1.500 |
| B4 | - | 15.000 | 2.500 | 1.000 |
| B5 | - | 30.000 | 15.000 | 2.500 |
| B6 | - | - | 5.000 | 1.500 |
| B7 | 40.000 | 20.000 | 5.000 | 2.000 |
| B8 | 35.000 | 20.000 | 3.000 | 1.500 |
| B9 | - | 25.000 | 3.000 | 1.500 |
| B10 | - | - | 1.000 | 500 |
| B11 | - | - | 2.500 | 1.000 |
| B12 | - | - | 1.500 | 500 |
| B13 | - | - | 2.000 | 500 |
| B14 | - | - | 5.000 | 2.000 |

| | | | | |
|---|---|---|---|---|
| B15 | - | - | 3.000 | 1.500 |
| B16 | - | 10.000 | 3.000 | 1.500 |
| B17 | - | - | 3.000 | 1.500 |

ມາດຕາ 11. ເຂດປະເມີນມູນຄ່າທີ່ດິນຂອງ ເມືອງ ປະທຸມພອນ

ທີ່ດິນເມືອງປະທຸມພອນ ທີ່ໄດ້ປະເມີນແລ້ວມີ 7 ເຂດ ( E1 – E7 ) ກວມເອົາ 68 ບ້ານ ມີ 4 ປະເພດຖະໜົນລະອຽດດັ່ງນີ້:

ຕາຕະລາງລາຍຊື່ບ້ານທີ່ນອນຢູ່ໃນເຂດປະເມີນລາຄາ ຕາມ E

| E1 | E2 | E3 | E4 |
|---|---|---|---|
| 1. ບ້ານ ນາສາຍຄຳ<br>2. ບ້ານ ເວີນ<br>3. ບ້ານ ໜອງແວງ<br>4. ບ້ານ ຜັກແພວ<br>5. ບ້ານ ໝີ້ພູ<br>6. ບ້ານ ບັງລຽງ<br>7. ບ້ານ ປາກຫ້ວຍ<br>8. ບ້ານ ນ້ຳໃສທ່າ<br>9. ບ້ານ ໜອງປັກແຮດ<br>10.ບ້ານ ນ້ຳໃສເທິງ<br>11. ບ້ານ ຫຼັກ 30<br>12.ບ້ານ ອຸດົມພັນ (ຫຼັກ34)<br>13.ບ້ານ ມ່ວງ<br>14.ບ້ານ ນ້ຳພາກ | 1. ບ້ານ ເຜົ່າສຳພັນ<br>2. ບ້ານ ຫຼັກ 40<br>3. ບ້ານ ໜອງບຶງ<br>4. ບ້ານ ທ່າຣູ້<br>5. ບ້ານ ແຊງ<br>6. ບ້ານ ນາກອກ<br>7. ບ້ານ ນາລານ<br>8. ບ້ານ ນາຂາມ<br>9. ບ້ານ ປາກຕອຍ<br>10. ບ້ານ ຄອນນ້ອຍ<br>11. ບ້ານ ໂຕະໂໝະທ່າ<br>12. ບ້ານ ປະທຸມພອນ<br>13. ບ້ານ ໜອງແຂ້<br>14. ບ້ານ ທາງແບ່ງ 48 | 1. ບ້ານ ໜອງເອກ<br>2. ບ້ານ ສີມສຸກ<br>3. ບ້ານ ເລົ່າຫຍ້າ<br>4. ບ້ານ ທົ່ງພະ<br>5. ບ້ານ ນ້ຳອ້ອມ<br>6. ບ້ານ ນາບອນ<br>7. ບ້ານ ຫ້ວຍຕ້ອນ | 1. ບ້ານ ກຽດໂງ້ງ<br>2. ບ້ານ ທົບສອກ<br>3. ບ້ານ ຫ້ວຍໂກະ<br>4. ບ້ານ ສະໂບດ<br>5. ບ້ານ ພີມມະລື<br>6. ບ້ານ ນາທົ່ງ<br>7. ບ້ານ ສະໜົງ<br>8. ບ້ານ ທົ່ງໄຊ<br>9. ບ້ານ ແກແລ<br>10. ບ້ານ ພະໂພ<br>11. ບ້ານ ພະລາຍ<br>12. ບ້ານ ຜັກຂະ<br>13. ບ້ານ ໜອງໝາກເອກ<br>14. ບ້ານ ແກ້ງນາງອ່າງ<br>15. ບ້ານ ຄອນທຸດ<br>16. ບ້ານ ກະລະ |
| **E5** | **E6** | **E7** | |
| 1. ບ້ານ ຫ້ວຍໃຜ່<br>2. ບ້ານ ໜອງບົວໃຫ່ຍ<br>3. ບ້ານ ໜອງບົວນ້ອຍ<br>4. ບ້ານ ຫ້ວຍແມ່ສັງ<br>5. ບ້ານ ບຸ່ນໃໝ່<br>6. ບ້ານ ພອງເພາະ<br>7. ບ້ານ ທ່າກ້ວາງ<br>8. ບ້ານ ປາອາວ<br>9. ບ້ານ ຫ້ວຍຍາງ | 1. ບ້ານ ໜອງປິງ<br>2. ບ້ານ ຕາຫວາງ<br>3. ບ້ານ ຕາອອງ | 1. ບ້ານ ຫົວດອນແດງ<br>2. ບ້ານ ສີຈັນໂທ<br>3. ບ້ານ ສີມຸງຄຸນ<br>4. ບ້ານ ເປືອຍລ້າວ<br>5. ບ້ານ ບຸ່ງຄຳ | |

ຕາຕະລາງຄິດໄລ່ສຳລັບທີ່ດິນເມືອງ ປະທຸມພອນ ( ກີບ / ຕາແມັດ )

| ເຂດປະເມີນ ລາຄາທີ່ດິນ | ປະເພດຖະໜົນ | | | |
|---|---|---|---|---|
| | ຖະໜົນສາຍເອກ ( ກີບ/ຕາແມັດ ) | ຖະໜົນສາຍເຊື່ອມຕໍ່ ( ກີບ/ຕາແມັດ ) | ຖະໜົນສາຍແຈກ ( ກີບ/ຕາແມັດ ) | ຖະໜົນທາງຮ່ອມ ( ກີບ/ຕາແມັດ ) |
| E1 | 25.000 | 20.000 | 12.000 | 5.000 |
| E2 | 35.000 | 15.000 | 8.000 | 4.000 |
| E3 | - | - | 5.000 | 1.500 |
| E4 | - | 12.000 | 7.000 | 2.000 |
| E5 | 30.000 | 15.000 | 7.000 | 3.000 |
| E6 | - | - | 2.500 | 1.000 |
| E7 | - | - | 10.000 | 5.000 |

ມາດຕາ 12. ເຂດປະເມີນມູນຄ່າທີ່ດິນຂອງ ເມືອງ ຈຳປາສັກ

ທີ່ດິນເມືອງ ຈຳປາສັກ ທີ່ໄດ້ປະເມີນແລ້ວມີ 13 ເຂດ ( G1 – G13) ກວມເອົາ 74 ບ້ານ ມີ 4 ປະເພດຖະໜົນລະອຽດດັ່ງນີ້:

ຕາຕະລາງລາຍຊື່ບ້ານທີ່ນອນຢູ່ໃນເຂດປະເມີນລາຄາ ຕາມ G

| G1 | G2 | G3 | G4 |
|---|---|---|---|
| 1. ບ້ານ ຫົວປາຊໍ້<br>2. ບ້ານ ຂອນແກ່ນ<br>3. ບ້ານ ຄັນແຍງ<br>4. ບ້ານ ວັດໄຊ | 1. ບ້ານ ພົນທະຄາມ<br>2. ບ້ານ ພະພິນ<br>3. ບ້ານ ໂພໄຊ<br>4. ບ້ານ ເມືອງແສນ<br>5. ບ້ານ ວັດທົ່ງ<br>6. ບ້ານ ວັດອາມາດ<br>7. ບ້ານ ວັດລະຄອນ<br>8. ບ້ານ ໂພນແພງ | 1. ບ້ານ ວັດທາດ<br>2. ບ້ານ ວັດຫຼວງເກົ່າ<br>3. ບ້ານ ໜອງວຽນ<br>4. ບ້ານ ໜອງສາ<br>5. ບ້ານ ທາງຄີບ<br>6. ບ້ານ ໄຮ່<br>7. ບ້ານ ໜອງທຳ A<br>8. ບ້ານ ໜອງເດີ່ນ<br>9. ບ້ານ ຫ້ວຍສາຫົວ | 1. ບ້ານ ພະນອນໃຕ້<br>2. ບ້ານ ເມືອງກາງ<br>3. ບ້ານ ກະຕຶບ<br>4. ບ້ານ ສີສະຫວ່າງ<br>5. ບ້ານ ທ່າແຕງທ່າ<br>6. ບ້ານ ຫ້ວຍແຫ້<br>7. ບ້ານ ລີ້ມໂຮງ |
| **G5** | **G6** | **G7** | **G8** |
| 1. ບ້ານ ທ່າຕານ<br>2. ບ້ານ ໃໝ່ທ່າ<br>3. ບ້ານ ໜອງຜ້າ<br>4. ບ້ານ ດອນກອຍ<br>5. ບ້ານ ດອນຊຽງຫຼ້າ<br>6. ບ້ານ ດອນຮີ | 1. ບ້ານ ຫ້ວຍມັນປາ<br>2. ບ້ານ ຫ້ວຍເງິນເໜືອ<br>3. ບ້ານ ຫ້ວຍເງິນໃຕ້<br>4. ບ້ານ ໂນນສະຫວ່າງ<br>5. ບ້ານ ນາຄວາຍ<br>6. ບ້ານ ນາດົງ | 1. ບ້ານ ດອນທາງຄວາຍ<br>2. ບ້ານ ໜອງນົກຂຽນ<br>3. ບ້ານ ສ້າງແຄນ<br>4. ບ້ານ ທາງແບ່ງ<br>5. ບ້ານ ໜອງຖ່ອນ<br>6. ບ້ານ ໂຄກກ່ອງ | 1. ບ້ານ ຫູ້ກແບ່ນ<br>2. ບ້ານ ໃໝ່ກາງ |

| G9 | G10 | G11 | G12 |
|---|---|---|---|
| 1. ບ້ານ ດອນຕະລາດ | 1. ບ້ານ ທາງໂງ<br>2. ບ້ານ ໜອງບົວຂາວ<br>3. ບ້ານ ທົ່ມຈານ<br>4. ບ້ານ ເປືອຍ | 1. ບ້ານ ໜອງສະໂນ<br>2. ບ້ານ ໜອງຂາມ<br>3. ບ້ານ ດອນກອງ<br>4. ບ້ານ ນາສະຫວ່າງ<br>5. ບ້ານ ໂນນທາຍ<br>6. ບ້ານ ໜອງຫີນ<br>7. ບ້ານ ທ່າແຕງເທິງ<br>8. ບ້ານ ໜອງໝາກແກ້ວ | 1. ບ້ານ ຄໍາຈະເລີນ<br>2. ບ້ານ ໜອງບົວ<br>3. ບ້ານ ງິ້ວບາ<br>4. ບ້ານ ເມີຍ<br>5. ບ້ານ ດອນໂດ່<br>6. ບ້ານ ໜອງທໍ່ B<br>7. ບ້ານ ໜອງແຕ້<br>8. ບ້ານ ສີສຸລາດ |

| G13 | |
|---|---|
| 1. ບ້ານ ໂນນດີ | 4. ບ້ານ ຫ້ວຍນາ |
| 2. ບ້ານ ໂນນດິນດໍາ | 5. ບ້ານ ໂນນສໍາລານ |
| 3. ບ້ານ ພີງໂພດ | |

ຕາຕະລາງຄິດໄລ່ສໍາລັບທີ່ດິນເມືອງ ຈໍາປາສັກ ( ກີບ / ຕາແມັດ )

| ເຂດປະເມີນລາຄາ ທີ່ດິນ | ປະເພດຖະໜົນ | | | |
|---|---|---|---|---|
| | ຖະໜົນສາຍເອກ ( ກີບ/ຕາແມັດ ) | ຖະໜົນສາຍເຊື່ອມຕໍ່ ( ກີບ/ຕາແມັດ ) | ຖະໜົນສາຍແຈກ ( ກີບ/ຕາແມັດ ) | ຖະໜົນທາງຮ່ອມ ( ກີບ/ຕາແມັດ ) |
| G1 | 30.000 | - | 25.000 | 2.000 |
| G2 | 30.000 | - | 25.000 | 2.000 |
| G3 | 60.000 | - | 25.000 | 2.000 |
| G4 | - | - | 20.000 | 2.000 |
| G5 | - | 25.000 | 20.000 | 2.000 |
| G6 | - | - | 20.000 | 2.000 |
| G7 | 30.000 | - | 20.000 | 2.000 |
| G8 | - | 25.000 | 20.000 | 1.500 |
| G9 | 50.000 | 35.000 | 25.000 | 2.000 |
| G10 | 30.000 | - | 15.000 | 1.500 |
| G11 | - | 25.000 | 15.000 | 2.000 |
| G12 | - | 25.000 | 15.000 | 700 |
| G13 | - | - | 10.000 | 500 |

**ມາດຕາ 13. ເຂດປະເມີນມູນຄ່າທີ່ດິນຂອງ ເມືອງ ສຸຂຸມາ**

ທີ່ດິນເມືອງ ສຸຂຸມາ ທີ່ໄດ້ປະເມີນແລ້ວມີ 14 ເຂດ ( H1 – H14) ກວມເອົາ 56 ບ້ານ ມີ 4 ປະເພດຖະໜົນ ລະອຽດດັ່ງນີ້:

ຕາຕະລາງລາຍຊື່ບ້ານທີ່ນອນຢູ່ໃນເຂດປະເມີນລາຄາ ຕາມ H

| H1 | H2 | H3 | H4 |
|---|---|---|---|
| 1. บ้าน สุຂุมา | 1. บ้าน หาด 3 ปาງ<br>2. บ้าน ดอนหอาย<br>3. บ้าน ดอนกอງ<br>4. บ้าน โนนพะเจ้า<br>5. บ้าน หนองพันอີງ<br>6. บ้าน แสนเมือງ<br>7. บ้าน ยาງสาอ<br>8. บ้าน ดอนดอกງີ้อ | 1. บ้าน บาก<br>2. บ้าน สามຂາ | 1. บ้าน ปากຊ້າງ<br>2. บ้าน ป่าກໍ່<br>3. บ้าน โนนยาງ |

| H5 | H6 | H7 | H8 |
|---|---|---|---|
| 1. บ้าน หງຽ | 1. บ้าน โนนแดງເໜືອ | 1. บ้าน ห้อยເຜີ້ງ<br>2. บ้าน ท่าຫຼວງ<br>3. บ้าน โคกก่อງ<br>4. บ้าน ใหม่แสนสุก | 1. บ้าน หนองບົວໂງ່ະ<br>2. บ้าน โคกສະຫວ່າງ<br>3. บ้าน ຜັກຕົບ<br>4. บ้าน นาຈານ<br>5. บ้าน ສຳຫຼຽງ<br>6. บ้าน ແຊ |

| H9 | H10 | H11 | H12 |
|---|---|---|---|
| 1. บ้าน ມ່ວງ<br>2. บ้าน ບົກ<br>3. บ้าน ລາດ<br>4. บ้าน ໂພນ<br>5. บ้าน ໂພນເຜີ້ງ | 1. บ้าน ຫ້ວຍໃຜ່<br>2. บ้าน ທັບຈານ<br>3. บ้าน ກຸດຕາບຸນ<br>4. บ้าน ໂຄກໜອງບົວ<br>5. บ้าน ທ່າດ່ານ<br>6. บ้าน ດົງຍາງ<br>7. บ้าน ໃໝ່ວັງໝາກແຊວ | 1. บ้าน ດົງຫົວບ້ານ<br>2. บ้าน ທ່າແສງ<br>3. บ้าน ທ່າໂພສີ<br>4. บ้าน ປ່າກ້ວຍ<br>5. บ้าน ອຸທຸມພອນ | 1. บ้าน ໂນນແດງໃຕ້<br>2. บ้าน ໂນນໂພ<br>3. บ้าน ໂນນຄຸ້ມ<br>4. บ้าน ໂນນເອື້ອງ |

| H13 | H14 |
|---|---|
| 1. บ้าน ໜອງກົງກວຽນ<br>2. บ้าน ບຸ່ງແກ້ວ<br>3. บ้าน ຫ້ວຍແຫ່ | 1. บ้าน ຫົວດອນໄຊ<br>2. บ้าน ຫາດດອນໄຊ<br>3. บ้าน ໝາກມີ້<br>4. บ้าน ກອກ<br>5. บ้าน ຕູມໃຫ່ຍ<br>6. บ้าน ຕູມນ້ອຍ |

ຕາຕະລາງຄິດໄລ່ສຳລັບທີ່ດິນເມືອງ ສຸຂຸມາ ( ກີບ / ຕາແມັດ )

| ເຂດປະເມີນ ລາຄາທີ່ດິນ | ປະເພດຖະໜົນ | | | |
|---|---|---|---|---|
| | ຖະໜົນສາຍເອກ ( ກີບ/ຕາແມັດ ) | ຖະໜົນສາຍເຊື່ອມຕໍ່ ( ກີບ/ຕາແມັດ ) | ຖະໜົນສາຍແຈກ ( ກີບ/ຕາແມັດ ) | ຖະໜົນທາງຮ່ອມ ( ກີບ/ຕາແມັດ ) |
| H1 | 50.000 | 30.000 | 20.000 | 5.000 |
| H2 | - | - | 1.500 | 700 |

| | | | | |
|---|---|---|---|---|
| H3 | 30.000 | 20.000 | 15.000 | 3.000 |
| H4 | - | 20.000 | 15.000 | 2.500 |
| H5 | - | 20.000 | 15.000 | 3.000 |
| H6 | - | - | 1.000 | 500 |
| H7 | - | - | 1.000 | 500 |
| H8 | - | - | 2.000 | 1.000 |
| H9 | - | - | 1.000 | 500 |
| H10 | 25.000 | - | 10.000 | 2.000 |
| H11 | - | - | 7.000 | 1.500 |
| H12 | 20.000 | - | 2.000 | 1.000 |
| H13 | - | 20.000 | 15.000 | 3.000 |
| H14 | - | - | 5.000 | 1.000 |

ມາດຕາ 14. ເຂດປະເມີນມູນຄ່າທີ່ດິນຂອງ ເມືອງ ມູນລະປາໂມກ

ທີ່ດິນເມືອງ ມູນລະປາໂມກ ທີ່ໄດ້ປະເມີນແລ້ວມີ 7 ເຂດ ( I1 – I7) ກວມເອົາ 36 ບ້ານ ມີ 4 ປະເພດຖະໜົນລະອຽດດັ່ງນີ້:

ຕາຕະລາງລາຍຊື່ບ້ານທີ່ນອນຢູ່ໃນເຂດປະເມີນລາຄາ ຕາມ I

| I1 | I2 | I3 | I4 |
|---|---|---|---|
| 1. ບ້ານ ເວີນແຄນ | 1. ບ້ານ ທ່າຄໍ້ | 1. ບ້ານ ເດື່ອເຕ້ຍ | 1. ບ້ານ ກະດັນ |
| 2. ບ້ານ ປາໂມກ | 2. ບ້ານ ທ່ານ້ອງ | 2. ບ້ານ ສະພັງເໜືອ | 2. ບ້ານ ກະດຽນ |
| | 3. ບ້ານ ທ່າແຮ່ | 3. ບ້ານ ສະພັງໃຕ້ | 3. ບ້ານ ໜອງງາ |
| | 4. ບ້ານ ເວີນ | 4. ບ້ານ ນາຂາມ | 4. ບ້ານ ຫ້ວຍຊາຍ |
| | 5. ບ້ານ ໃໝ່ | 5. ບ້ານ ຫ້ວຍຍາງ | 5. ບ້ານ ສົ້ມໂຮງ |
| | 6. ບ້ານ ລວງໂຊ້ | 6. ບ້ານ ຫ້ວຍແຮດ | 6. ບ້ານ ກ້ວຍ |
| | | 7. ບ້ານ ຫ້ວຍໂກ | 7. ບ້ານ ໜອງບົວທອງ |
| | | 8. ບ້ານ ນາດີ | |
| | | 9. ບ້ານ ຊານຫ້ວາ | |
| | | 10. ບ້ານ ສະເຫຼົາໂສງ | |
| | | 11. ບ້ານ ເວີນຍາງ | |

| I5 | I6 | I7 |
|---|---|---|
| 1. ບ້ານ ເປືອ | 1. ບ້ານ ທ່າກັງ | 1. ບ້ານ ດອນເປືອຍ |
| 2. ບ້ານ ປໍ່ | 2. ບ້ານ ຫີນລາດ | 2. ບ້ານ ດອນນາງລອຍ |
| 3. ບ້ານ ເຂັມ | 3. ບ້ານ ກ້ານເຫຼືອງ | |
| | 4. ບ້ານ ທ່າຫີນ | |
| | 5. ບ້ານ ໂພນດູ່ | |

ຕາຕະລາງຄິດໄລ່ສຳລັບທີ່ດິນເມືອງ ມຸນລະປາໂມກ ( ກີບ / ຕາແມັດ )

| ເຂດປະເມີນລາຄາທີ່ດິນ | ປະເພດຖະໜົນ | | | |
|---|---|---|---|---|
| | ຖະໜົນສາຍເອກ ( ກີບ/ຕາແມັດ ) | ຖະໜົນສາຍເຊື່ອມຕໍ່ ( ກີບ/ຕາແມັດ ) | ຖະໜົນສາຍແຈກ ( ກີບ/ຕາແມັດ ) | ຖະໜົນທາງຮ່ອມ ( ກີບ/ຕາແມັດ ) |
| I1 | 46.000 | 32.000 | 20.000 | 3.000 |
| I2 | 30.000 | 22.000 | 14.000 | 2.500 |
| I3 | 30.000 | 20.000 | 14.000 | 2.500 |
| I4 | 30.000 | 18.000 | 10.000 | 2.000 |
| I5 | 30.000 | 16.000 | 10.000 | 2.000 |
| I6 | 20.000 | 15.000 | 10.000 | 2.000 |
| I7 | - | - | - | 1.000 |

ມາດຕາ 15. ເຂດປະເມີນມູນຄ່າທີ່ດິນຂອງ ເມືອງ ໂຂງ

ທີ່ດິນເມືອງ ໂຂງ ທີ່ໄດ້ປະເມີນແລ້ວມີ 10 ເຂດ ( J1 – J10 ) ກວມເອົາ 114 ບ້ານ ມີ 4 ປະເພດຖະໜົນລະອຽດດັ່ງນີ້:

ຕາຕະລາງລາຍຊື່ບ້ານທີ່ນອນຢູ່ໃນເຂດປະເມີນລາຄາ ຕາມ J

| J1 | J2 | J3 | J 4 |
|---|---|---|---|
| 1. ບ້ານ ນາຝັ່ງ | 1. ບ້ານ ເຕົ້າປຸ້ງ | 1. ບ້ານ ຫາດ | 1. ບ້ານ ໄໝ່ສີວິໄລ |
| 2. ບ້ານ ສີງເປືອຍ | 2. ບ້ານ ນາແວງ | 2. ບ້ານ ເວີນຂາວ | 2. ບ້ານ ແສນໂຮມ |
| 3. ບ້ານ ແກ້ງ | 3. ບ້ານ ນາແສນພັນ | 3. ບ້ານ ກະດັນ | 3. ບ້ານ ທ່າມ່ວງ |
| 4. ບ້ານ ບຸ່ນນ້ອຍ | 4. ບ້ານ ນາເຊືອກ | 4. ບ້ານ ຊີນລະວຽງ | 4. ບ້ານ ເສັດເຕົາເຫຼັກ |
| 5. ບ້ານ ທົ່ງເຂົ້າ | 5. ບ້ານ ນາສົ້ມໂຮງ | 5. ບ້ານ ພຽງດີ | 5. ບ້ານ ທ່າຄໍ້ |
| 6. ບ້ານ ທ່າໂພ | 6. ບ້ານ ສາມຄ້າງ | 6. ບ້ານ ເສັດສະຫວັນ | 6. ບ້ານ ບຶງງາມ |
| 7. ບ້ານ ຈານ | 7. ບ້ານ ຫາດຊາຍຄູນ | 7. ບ້ານ ໂພນ | 7. ບ້ານ ເສັດນ້ຳອ້ອມ |
| 8. ບ້ານ ກົກປາແດກ | 8. ບ້ານ ບຸ່ງ | 8. ບ້ານ ຂີ້ນາກ | 8. ບ້ານ ນາສີງເປືອຍ |
| 9. ບ້ານ ໂພນສະອາດ | 9. ບ້ານ ຫ້ວຍໃຜ່ | 9. ບ້ານ ນາກະສັງ | 9. ບ້ານ ນາໜອງເທົ່າ |
| 10. ບ້ານ ດອນຂະໜົານ້ອຍ | 10. ບ້ານ ສີງເປືອຍ | | 10. ບ້ານ ໂສດ |
| | 11. ບ້ານ ນາລານ | | 11. ບ້ານ ນາປາກຽບ |
| | 12. ບ້ານ ຫ້ວຍໄຮ | | 12. ບ້ານ ໂພນວິໄຊ |
| | 13. ບ້ານ ລີມພັດ | | |

| J5 | J6 | J7 | |
|---|---|---|---|
| 1. ບ້ານ ແສນຮາດນ້ອຍ | 1. ບ້ານ ດອນກອຍ | 1. ບ້ານ ຫົວພີມານ | 15. ບ້ານ ໂລງຊຶ້ງ |
| 2. ບ້ານ ແສນຮາດໃຫ່ຍ | 2. ບ້ານ ດອນແຮດ | 2. ບ້ານ ຫົວລີບປາກດີ | 16. ບ້ານ ທາງໂລງ |
| 3. ບ້ານ ຫົວໂຂງ | 3. ບ້ານ ຫົວຮີເວີນ | 3. ບ້ານ ລີບປາກດີກາງ | 17. ບ້ານ ດອນລຽງ |

| | | |
|---|---|---|
| 4. ບ້ານ ໂຂງຫາດງິ້ວ<br>5. ບ້ານ ຫົວໂຂງແຫຼມ<br>6. ບ້ານ ແສນຫຼ່າມ<br>7. ບ້ານ ດົງ<br>8. ບ້ານ ເວີນທອງ<br>9. ບ້ານ ຫົວສັນ<br>10. ບ້ານ ຫາງສັນ<br>11. ບ້ານ ດອນເຫຼັກໄຟ<br>12. ບ້ານ ເມືອງແສນ<br>13. ບ້ານ ຫີນສື່ວ<br>14. ບ້ານ ດອນຫອດ<br>15. ບ້ານ ກາງໂຂງ<br>16. ບ້ານ ນາ<br>17. ບ້ານ ຫ້ວຍ | 4. ບ້ານ ດອນພານເພົາ<br>5. ບ້ານ ຂະເໜົາພູແມວ<br>6. ບ້ານ ຮີຫາດ<br>7. ບ້ານ ຂະເໜົາໂພນຈໍາ<br>ປາ<br>8. ບ້ານ ຂະເໜົາປາກເຊ | 4. ບ້ານ ລີບປາກດີຈິ່ກ<br>5. ບ້ານ ລີບປາກດີໂພຕາກ<br>6. ບ້ານ ລີບປາກດີຄອນນ້ອຍ<br>7. ບ້ານ ດອນນາງຄວັດ<br>8. ບ້ານ ດອນເປືອຍ<br>9. ບ້ານ ດອນຊ້າງ<br>10. ບ້ານ ທໍລະທີ<br>11. ບ້ານ ພີມານໂພນ<br>12. ບ້ານ ດອນຖານ<br>13. ບ້ານ ຫົວໂລງ<br>14. ບ້ານ ໂລງກາງ<br>18. ບ້ານ ດອນກະເດັນ<br>19. ບ້ານ ຫົວຮີນ້ອຍ<br>20. ບ້ານ ຫົວຊ້າງໄພ<br>21. ບ້ານ ຫາງຊ້າງໄພ<br>22. ບ້ານ ຫາງຮີນ້ອຍ<br>23. ບ້ານ ດອນໂຈນ<br>24. ບ້ານ ດອນສໍາໂຮງ |
| **J8** | **J9** | **J10** |
| 1. ບ້ານ ເດື່ອ<br>2. ບ້ານ ທ່າໂພໃຕ້<br>3. ບ້ານ ທ່າພ້າວ<br>4. ບ້ານ ທ່າໝາກເຫັບ<br>5. ບ້ານ ແກ້ງກຸ່ມ<br>6. ບ້ານ ສີມເວີນອອກ<br>7. ບ້ານ ເວີນສີມ<br>8. ບ້ານ ສາລາ<br>9. ບ້ານ ມ່ວງ | 1. ບ້ານ ດອນເດດ<br>2. ບ້ານ ດອນຄອນ<br>3. ບ້ານ ຫາງຄອນ<br>4. ບ້ານ ດອນເຊໂຮງ<br>5. ບ້ານ ຫົວສະດໍາ<br>6. ບ້ານ ຫາງສະດໍາ<br>7. ບ້ານ ດອນພະເພັງ | 1. ບ້ານ ດອນຕານ<br>2. ບ້ານ ດອນແອນ<br>3. ບ້ານ ດອນຊີມ<br>4. ບ້ານ ດອນຈອມ<br>5. ບ້ານ ດອນແຄ |

### ຕາຕະລາງຄິດໄລ່ສໍາລັບທີ່ດິນເມືອງ ໂຂງ ( ກີບ / ຕາແມັດ )

| ເຂດປະເມີນ ລາຄາທີ່ດິນ | ປະເພດຖະໜົນ | | | |
|---|---|---|---|---|
| | ຖະໜົນສາຍເອກ ( ກີບ/ຕາແມັດ ) | ຖະໜົນສາຍເຊື່ອມຕໍ່ ( ກີບ/ຕາແມັດ ) | ຖະໜົນສາຍແຈກ ( ກີບ/ຕາແມັດ ) | ຖະໜົນທາງຮ່ອມ ( ກີບ/ຕາແມັດ ) |
| J1 | 40.000 | 25.000 | 15.000 | 13.000 |
| J2 | 50.000 | 23.000 | 20.000 | 15.000 |
| J3 | 50.000 | 37.000 | 33.000 | 20.000 |
| J4 | 50.000 | 35.000 | 19.000 | 8.000 |
| J5 | 60.000 | 35.000 | 30.000 | 15.000 |
| J6 | - | - | 20.000 | 8.000 |
| J7 | - | - | 20.000 | 8.000 |

| | | | | |
|---|---|---|---|---|
| J8 | - | - | 20.000 | 13.000 |
| J9 | - | 40.000 | 30.000 | 15.000 |
| J10 | - | - | 15.000 | 8.000 |

## ໝວດ III
## ອົງການຄຸ້ມຄອງການປະເມີນມູນຄ່າທີ່ດິນໃນ 6 ເມືອງ ແຂວງຈຳປາສັກ

**ມາດຕາ 16. ອົງການຄຸ້ມຄອງການປະເມີນມູນຄ່າທີ່ດິນ ໃນ 6 ເມືອງ ແຂວງຈຳປາສັກ**

ອົງການຄຸ້ມຄອງປະເມີນມູນຄ່າທີ່ດິນໃນ 6 ເມືອງ ແຂວງຈຳປາສັກ ປະກອບມີ:

1. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ.
2. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຊະນະສົມບູນ.
3. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງປະທຸມພອນ.
4. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຈຳປາສັກ.
5. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງສຸຂຸມາ.
6. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງມູນລະປາໂມກ.
7. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງໂຂງ.

**ມາດຕາ 17. ສິດ ແລະ ໜ້າທີ່ຂອງ ພະແນກຊັບພະຍາກອນທຳຊາດ ແລະ ສິ່ງແວດລ້ອມແຂວງ**

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນໃຈກາງໃນການປະສານວຽກງານ ປະເມີນມູນຄາທີ່ດິນຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດ 6 ເມືອງ ແຂວງຈຳປາສັກຄື: ເມືອງຊະນະສົມບູນ, ເມືອງປະທຸມພອນ, ເມືອງຈຳປາສັກ, ເມືອງສຸຂຸມາ, ເມືອງມູນລະປາໂມກ ແລະ ເມືອງໂຂງ ໂດຍມອບໃຫ້ຂະແໜງທີ່ດິນ ເປັນຜູ້ຮັບຜິດຊອບໂດຍກົງ, ທັງເປັນເຈົ້າການປະສານສົມທົບກັບບັນດາເມືອງ ໃນການຄຸ້ມຄອງວຽກງານປະເມີນມູນຄ່າທີ່ດິນ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ນຳເອົາແນວທາງແຜນນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ເຊື່ອມຊຶມ, ເຜີຍແຜ່ ເພື່ອນຳໄປຈັດຕັ້ງປະຕິບັດ.
2. ປະກອບບຸກຄະລາກອນ ເຂົ້າໃສ່ວຽກງານການຄຸ້ມຄອງ ລະບົບປະເມີນມູນຄ່າທີ່ດິນ ໃຫ້ພຽງພໍ ໂດຍໃຫ້ສອດຄ່ອງກັບພາລະບົດບາດສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້.
3. ຕິດຕາມ, ກວດກາ ການປະຕິບັດຂໍ້ຕົກລົງ ວ່າດ້ວຍການປະເມີນມູນຄ່າທີ່ດິນ, ປະສານສົມທົບກັບຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງຊະນະສົມບູນ, ເມືອງປະທຸມພອນ, ເມືອງຈຳປາສັກ, ເມືອງສຸຂຸມາ, ເມືອງມູນລະປາໂມກ ແລະ ເມືອງໂຂງ.
4. ປະຕິບັດສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 18. ສິດ ແລະ ໜ້າທີ່ຂອງ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ 6 ເມືອງ.**

ໃນການຄຸ້ມຄອງປະເມີນມູນຄ່າທີ່ດິນ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ 6 ເມືອງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ນຳເອົາແນວທາງແຜນນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ທີ່ຕິດພັນກັບວຽກງານການປະເມີນມູນຄ່າທີ່ດິນ ເຊື່ອມຊຶມ, ເຜີຍແຜ່ ແນະນຳໃຫ້ທົ່ວສັງຄົມ ໄດ້ຮັບຮູ້ເຂົ້າໃຈ ເພື່ອນຳໄປຈັດຕັ້ງປະຕິບັດ ໃຫ້ໄດ້ຮັບປະສິດທິຜົນສູງ.
2. ປະສານສົມທົບກັບ ອຳນາດການປົກຄອງທ້ອງຖິ່ນ, ຫ້ອງການທີ່ກ່ຽວຂ້ອງ ທີ່ຂຶ້ນກັບເມືອງຂອງຕົນ ເພື່ອເກັບກຳຂໍ້ມູນການປ່ຽນແປງຂຶ້ນລົງຂອງ ລາຄາປະກົດຕົວການມອບ - ໂອນສິດນຳໃຊ້ທີ່ດິນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ, ວາງແຜນກຳນົດອັດຕາຄິດໄລ່ຄືນໃໝ່ ເພື່ອນຳສະເໜີຂັ້ນເທິງ ພິຈາລະນາຕາມລະບຽບການທີ່ໄດ້ກຳນົດໄວ້.
3. ປະຕິບັດສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 19. ສິດ ແລະ ໜ້າທີ່ຂອງ ໜ່ວຍງານປະເມີນມູນຄ່າທີ່ດິນ.**

ໃນການຄຸ້ມຄອງວຽກງານປະເມີນມູນຄ່າທີ່ດິນ ໜ່ວຍງານປະເມີນມູນຄ່າທີ່ດິນຂອງ ຂະແໜງທີ່ດິນ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ປະສານສົມທົບກັບ ອຳນາດການປົກຄອງທ້ອງຖິ່ນ, ຂະແໜງການທີ່ກ່ຽວຂ້ອງຂອງ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ອຳນາດການປົກຄອງເມືອງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ເກັບກຳຂໍ້ມູນການປ່ຽນແປງຂຶ້ນລົງຂອງ ມູນຄ່າທີ່ດິນ ໃນຂອບເຂດຄວາມຮັບ ຜິດຊອບຂອງຕົນ.
2. ຝຶກອົບຮົມທາງດ້ານວິຊາການ ໃຫ້ແກ່ພະນັກງານໜ່ວຍງານປະເມີນລາຄາທີ່ດິນຂອງຕົນ ແລະ ຫ້ອງການຊັບຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ.
3. ປະຕິບັດສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 20. ສິດ ແລະ ໜ້າທີ່ຂອງ ພະນັກງານປະເມີນມູນຄ່າທີ່ດິນ.**

ໃນການຄຸ້ມຄອງວຽກງານປະເມີນມູນຄ່າທີ່ດິນ ພະນັກງານປະເມີນມູນຄ່າທີ່ດິນ, ມີສິດ ແລະ ໜ້າທີ່ ຕາມການມອບໝາຍດັ່ງນີ້:

1. ເຂົ້າເຖິງສະຖານທີ່ ເພື່ອເກັບກຳຂໍ້ມູນຕາມສະພາບຕົວຈິງ ໃນການມອບ - ໂອນສິດນຳໃຊ້ທີ່ດິນ.
2. ສຳຫຼວດ, ວັດແທກເກັບກຳຂໍ້ມູນ ໃຫ້ຄົບຖ້ວນ ແລະ ຖືກຕ້ອງ.
3. ຕິດຕາມ, ກວດກາປະເມີນຜົນການຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບລະບຽບຫຼັກການ.
4. ປະສານສົມທົບກັບ ອຳນາດການປົກຄອງບ້ານໃນການປະເມີນມູນຄ່າທີ່ດິນ.

## ໝວດທີ IV

## ການຕິດຕາມກວດກາ ແລະ ການເກັບຮັກສາເອກະສານ

**ມາດຕາ 21. ການຕິດຕາມກວດກາພາຍໃນ**

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນຜູ້ຮັບຜິດຊອບຕິດຕາມ, ກວດກາປະເມີນຜົນ ແລະ ແກ້ໄຂບັນຫາຕ່າງໆ ກ່ຽວກັບການປະເມີນມູນຄ່າທີ່ດິນ ໂດຍມອບໃຫ້ຂະແໜງ

ການກ່ຽວຂ້ອງ ເປັນເຈົ້າການກ່ຽວກັບການຄິດໄລ່ ເກັບຄ່າທຳນຽມຈົດທະບຽນມອບ - ໂອນສິດນຳໃຊ້ທີ່ດິນ ໃຫ້ສອດຄ່ອງຕາມເຂດປະເມີນລາຄາ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

### ມາດຕາ 22. ການຕິດຕາມກວດກາພາຍນອກ

ອົງການຕິດຕາມກວດກາພາຍນອກ ປະກອບມີ: ສະພາປະຊາຊົນແຂວງ, ພະແນກກວດກາລັດແຂວງ, ອົງການໄອຍະການປະຊາຊົນແຂວງ ແລະ ອົງການກວດສອບພາກໃຕ້.

### ມາດຕາ 23. ການເກັບຮັກສາເອກະສານ

ຫຼັງຈາກພະນັກງານ ໄດ້ດຳເນີນການປະເມີນມູນຄ່າທີ່ດິນແລ້ວ ຂະແໜງທີ່ດິນ ຕ້ອງເກັບຮັກສາເອກະສານ ກ່ຽວກັບຄຳຮ້ອງຂໍຈົດທະບຽນ, ຂໍ້ມູນພາກສະໜາມ, ການຄິດໄລ່, ບົດລາຍງານຂອງ ພະນັກງານປະເມີນມູນຄ່າທີ່ດິນ ແລະ ເອກະສານອື່ນໆ ທີ່ພົວພັນເຖິງການປະເມີນມູນຄ່າທີ່ດິນ ເຂົ້າໄວ້ຢູ່ໃນລະບົບສຳນວນ.

## ໝວດທີ V

## ການປະຊາສຳພັນ ແລະ ປະກາດແຈ້ງການ

### ມາດຕາ 24. ການປະຊາສຳພັນ

ຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ດຳເນີນວຽກງານປະຊາສຳພັນ ພາຍໃນແຂວງ ຫຼື ເມືອງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ, ໂຄສະນາເຜີຍແຜ່ຂັ້ນຕອນເນື້ອໃນຕ່າງໆ ທີ່ລະບຸໄວ້ໃນຂໍ້ຕົກລົງສະບັບນີ້.

### ມາດຕາ 25. ປະກາດແຈ້ງການ

ຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ອອກສຳເນົາເຂດປະເມີນມູນຄ່າທີ່ດິນ ຕາມຕາຕະລາງຄິດໄລ່, ຕິດປະກາດແຈ້ງການຢູ່ ຫ້ອງການປົກຄອງບ້ານ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ແຂວງ ເພື່ອໃຫ້ທົ່ວສັງຄົມຮັບຊາບ.

## ໝວດທີ VI

## ຂໍ້ຫ້າມ

### ມາດຕາ 26. ຂໍ້ຫ້າມສຳລັບພະນັກງານປະເມີນມູນຄ່າທີ່ດິນ

ຫ້າມພະນັກງານໃຊ້ສິດ ແລະ ໜ້າທີ່ເກີນຂອບເຂດ, ໃຊ້ຄວາມຮຸນແຮງ, ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານ ແລະ ປະຊາຊົນທົ່ວໄປ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດຜົນປະໂຫຍດຂອງ ປະຊາຊົນ.

### ມາດຕາ 27. ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳປົກປິດ, ເຊື່ອງອຳຄວາມຈິງ, ບໍ່ຈິງໃຈແຈ້ງຂໍ້ມູນ, ໃຊ້ຄວາມຮຸນແຮງ, ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານ ທີ່ເປັນການລະເມີດລະບຽບກົດໝາຍ.

## ໝວດທີ VII

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 28. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

**ມາດຕາ 29. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ປະຕິບັດວິໃນປັບໃໝ ຫຼື ດຳເນີນຄະດີຕາມກໍລະນີໜັກ ຫຼື ເບົາ.

ພະນັກງານຜູ້ໃດຜູ້ໜຶ່ງ ຫາກໄດ້ປະຕິບັດໜ້າທີ່ວຽກງານຂອງຕົນ ໂດຍມີເຈດຕະນາປົກປິດ, ເຊື່ອງອຳຄວາມຈິງ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດຂອງຕົນເອງ ຫຼື ຄອບຄົວ ເພື່ອຝ່າຍໃດຝ່າຍໜຶ່ງ ຈະຖືກດຳເນີນຄະດີຕາມກົດໝາຍ.

## ໝວດທີ VIII

## ບົດບັນຍັດສຸດທ້າຍ

**ມາດຕາ 30. ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 31. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງສິບຫ້າວັນ ນັບແຕ່ວັນລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

**ເຈົ້າແຂວງ**

ແຂວງຈຳປາສັກ
ເຈົ້າແຂວງ

**ປອ. ບຸນທອງ ດີວິໄຊ**